# ຜົນການປະເມີນຄວາມຫຍຸ້ງຍາກ

# ໃນການດຳເນີນການນຳເຂົ້າ - ສົ່ງອອກ ແລະ ນຳສິນຄ້າຜ່ານແດນ ຂອງພາກທຸລະກິດ ຢູ່ນະຄອນຫຼວງວຽງຈັນ ແລະ ບາງແຂວງພາກກາງ ແລະ ພາກໃຕ້

## I. ພາກສະເໜີ

ເພື່ອພັດທະນາຂະແໜງການຄ້າໃຫ້ສືບຕໍ່ຂະຫຍາຍຕົວ ແລະ ປະກອບສ່ວນເຂົ້າໃນການຂະຫຍາຍຕົວທາງດ້ານເສດຖະກິດ ກໍ່ຄືການສືບຕໍ່ເປົ້າໝາຍໄລຍະກາງ ແລະ ໄລຍະຍາວຂອງພື້ນຖານການພັດທະນາທີ່ພັກ ແລະ ລັດຖະບານຂອງ ສປປ ລາວ ໄດ້ວາງອອກ ໃຫ້ກາຍເປັນເສດຖະກິດຕະຫຼາດທີ່ສາມາດແຂ່ງຂັນໄດ້. ພາຍຫຼັງທີ່ ສປປ ລາວ ໄດ້ເຂົ້າເປັນສະມາຊິກອົງການການຄ້າໂລກ ຢ່າງເປັນທາງການ ໃນເດືອນ ກຸມພາ 2013 ແລະ ເຂົ້າສູ່ AEC ຢ່າງເປັນທາງການໃນວັນທີ 31 ທັນວາ 2015, ລັດຖະບານ ລາວ ໄດ້ກຳນົດນະໂຍບາຍສົ່ງເສີມການຄ້າຫຼາຍຢ່າງ ຊຶ່ງລວມມີການສ້າງເງື່ອນໄຂເອື້ອອຳນວຍໃຫ້ແກ່ພາກທຸລະກິດ ລວມມີວຽກງານອຳນວຍຄວາມສະດວກທາງດ້ານການຄ້າ ໂດຍຍົກສູງຄວາມໂປ່ງໃສ, ຫຼຸດຜ່ອນຂັ້ນຂອດໃນການດຳເນີນເອກະສານນຳເຂົ້າ - ສົ່ງອອກ, ຫຼຸດຜ່ອນສິ່ງກີດຂວາງທາງດ້ານການຄ້າທີ່ບໍ່ແມ່ນອັດຕາພາສີ, ແລະ ເຮັດໃຫ້ບັນດານິຕິກຳທີ່ຕິດພັນກັບການຄ້າມີຄວາມສອດຄ່ອງກັບຫຼັກການພື້ນຖານຂອງສົນທິສັນຍາພາກພື້ນ ແລ ສາກົນ ທີ່ ສປປ ລາວ ເປັນພາຄີ. ທັງໝົດນັ້ນ ແມ່ນເພື່ອຮັບປະກັນຄວາມສາມາດແຂ່ງຂັນກັບສາກົນ ແລະ ພາກພື້ນ ຂອງພາກທຸລະກິດ ຢູ່ ສປປ ລາວ.

ດັ່ງນັ້ນ, ເພື່ອປະກອບສ່ວນເຂົ້າໃນການຜັນຂະຫຍາຍນະໂຍບາຍດັ່ງກ່າວ, ຫ້ອງການປະຈຳຂອງກອງເລຂາອຳນວຍຄວາມສະດວກທາງດ້ານການຄ້າ ໄດ້ສ້າງບົດສອບຖາມເພື່ອນຳໃຊ້ເຂົ້າໃນການເກັບກຳຂໍ້ມູນກ່ຽວກັບ ຄວາມຫຍຸ້ງຍາກໃນການນຳເຂົ້າ - ສົ່ງອອກ ແລະ ນຳສິນຄ້າຜ່ານແດນສາກົນ ຂອງພາກທຸລະກິດໂດຍມີຈຸດປະສົງເພື່ອກຳນົດບັນຫາ ແລະ ຂໍ້ຫຍຸ້ງຍາກ ທີ່ເກີດຂື້ນໃນພາກປະຕິບັດຕົວຈິງ ຂອງຫົວໜ່ວຍທຸລະກິດນຳເຂົ້າ - ສົ່ງອອກ. ບົດສອບຖາມ ໄດ້ສົ່ງໃຫ້ 80 ບໍລິສັດ ນຳເຂົ້າ - ສົ່ງອອກ ຢູ່ນະຄອນຫຼວງວຽງຈັນ ໃນນັ້ນມີ 47 ບໍລິສັດ ຕອບກັບ. ນອກນັ້ນ, ໄດ້ສົ່ງແບບສອບຖາມໃຫ້ 90 ບໍລິສັດ ຢູ່ 17 ແຂວງ ແຕ່ບໍ່ໄດ້ຮັບຄຳຕອບກັບ. ສະນັ້ນ, ຈຶ່ງໄດ້ລົງເກັບກຳຂໍ້ມູນຕົວຈິງ ຈາກ 12 ບໍລິສັດ ຢູ່ 05 ແຂວງ ຄື: ແຂວງບໍລິຄຳໄຊ (04 ບໍລິສັດ); ແຂວງຄຳມ່ວນ ( 04 ບໍລິສັດ); ແຂວງສະຫວັນນະເຂດ (05 ບໍລິສັດ) ແລະ ແຂວງຈຳປາສັກ (05 ບໍລິສັດ).

## II. ສັງລວມບັນຫາຂອງພາກທຸລະກິດ

ໃນການເກັບກຳຂໍ້ມູນໃນຄັ້ງນີ້ ເຖິງວ່າ ຂໍ້ມູນທີ່ເກັບກຳໄດ້ອາດຈະບໍ່ໄດ້ຈາກພາກທຸລະກິດໃນຂອບເຂດທົ່ວປະເທດ ແຕ່ກໍ່ສາມາດສະທ້ອນໃຫ້ເຫັນບັນຫາທີ່ມີລັກສະນະລວມໃນການປະຕິບັດຕົວຈິງ ກ່ຽວກັບ ການນຳເຂົ້າ - ສົ່ງອອກສິນຄ້າ ເປັນຕົ້ນການປະສານງານລະຫວ່າງ ພາກລັດ ກັບພາກທຸລະກິດ, ຮູບແບບການຈັດຕັ້ງປະຕິບັດ ແລະ ການຜັນຂະຫຍາຍນະໂຍບາຍ ຂອງລັດຖະບານ ທີ່ຍັງບໍ່ທັນເປັນເອກະພາບກັນ ໃນຂອບເຂດທົ່ວປະເທດ ແລະ ຍັງບໍ່ທັນສອດຄ່ອງກັບລະບຽບກົດໝາຍຂອງ ສປປ ລາວ, ແລະ ບັນດາສົນທິສັນຍາພາກພື້ນ ແລະ ສາກົນ ທີ່ສປປ ລາວ ເປັນພາຄີ ຊຶ່ງມີລາຍລະອຽດດັ່ງລຸ່ມນີ້:

1. **ການຂໍອະນຸຍາດນຳເຂົ້າ - ສົ່ງອອກສິນຄ້າ** ແມ່ນມີຄວາມຫຍຸ້ງຍາກ ເນື່ອງຈາກວ່າມີຫຼາຍຂັ້ນຕອນ, ບາງຂອດຂອງການຂໍອະນຸຍາດແມ່ນໃຊ້ເວລາໃນການດຳເນີນເອກະສານຫຼາຍເກີນຄວາມຈຳເປັນ. ພ້ອມນັ້ນ, ໃນຕົວຈິງ ມີຫຼາຍຂະແໜງການຍັງຢາກມີສ່ວນຮ່ວມໃນການອະນຸຍາດນຳເຂົ້າ - ສົ່ງອອກ ຈຶ່ງກໍ່ໃຫ້ເກີດຄວາມບໍ່ເປັນເອກະພາບ ກົມກຽວ ແລະ ສອດຄ່ອງກັນທາງດ້ານນິຕິກຳ. ບັນຫາທີ່ພາກທຸລະກິດໃຫ້ຄວາມສົນໃຈຫຼາຍແມ່ນການນຳເຂົ້າ - ສົ່ງອອກ ຜະລິດຕະພັນໄມ້ ໂດຍໄດ້ຊີ້ໃຫ້ເຫັນວ່າ ການຈັດຕັ້ງປະຕິບັດລະບຽບການ ເຊັ່ນ ແຈ້ງການເລກທີ 1765/ກງ ວ່າດ້ວຍຄຳສັ່ງແນະນຳເລື່ອງເອົາໃຈໃສ່ຄຸ້ມຄອງການສົ່ງອອກໄມ້ ເພື່ອເກັບລາຍຮັບເຂົ້າງົບປະມານຢ່າງຖືກຕ້ອງ, ຄົບຖ້ວນ, ທັນເວລາ ຂອງກະຊວງການເງິນ, ແຈ້ງການເພີ່ມເຕີມ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 2857/ຫກ.ກຂອ ວ່າດ້ວຍ ແຈ້ງການເພີ່ມເຕີມເລື່ອງປັບປຸງເນື້ອໃນແຈ້ງການເລກທີ 1904/ອຄ.ກຂອ, ຂໍ້ 1.4 ກ່ຽວກັບ ຂັ້ນຕອນການອອກອະນຸຍາດນຳເຂົ້າ ແລະ ສົ່ງອອກໄມ້ ແລະ ຜະລິດຕະພັນໄມ້ ຍັງມີຄວາມລ່າຊ້າ ແລະ ສັບສົນໃນການຈັດຕັ້ງປະຕິບັດສຳລັບ ພາກທຸລະກິດ ຍ້ອນວ່າ ພາລະບົດບາດຂອງຂະແໜງການທີ່ກ່ຽວຂ້ອງ, ຄວາມໝາຍຂອງຄຳສັບ ແລະ ປະເພດຂອງສິນຄ້າ ຍັງຂາດຄວາມເປັນເອກະພາບ ຊັດເຈນ ແລະ ກົມກຽວ.

    ພ້ອມນັ້ນ, ພາກທຸລະກິດຍັງເຫັນວ່າ ອີກສາເຫດ ທີ່ພາໃຫ້ເກີດມີຄວາມລ່າຊ້າໃນການອອກອະນຸຍາດແມ່ນຍ້ອນເຈົ້າໜ້າທີ່ຂອງລັດ ຂາດຄວາມຊຳນານ ຄວາມເຂົ້າໃຈຕໍ່ບັນຫາ ແລະ ຂາດສິດໃນການຕັດສິນໃຈ.

2. **ການແຈ້ງເອກະສານພາສີ** ກໍ່ແມ່ນອີກຂັ້ນຕອນທີ່ສ້າງຄວາມຫຍຸ້ງຍາກໃຫ້ແກ່ພາກທຸລະກິດບໍ່ໜ້ອຍ ໂດຍສ່ວນໃຫຍ່ແມ່ນເກີດມາຈາກບັນຫາທາງດ້ານເຕັກນິກ, ອຸປະກອນ ແລະ ເຄື່ອງມືຮັບໃຊ້ໃນການດຳເນີນຂັ້ນຕອນແຈ້ງເອກະສານພາສີ ເຊັ່ນ: ລະບົບໂປຼແກຼມ ແລະ ຄອມພິວເຕີ້ ບໍ່ຮັບປະກັນຄວາມສະຖຽນ ເຊັ່ນລະບົບຫຼົ້ມ, ໄຟ້ຟ້າບໍ່ພໍ ເປັນຕົ້ນ ຊຶ່ງເຮັດໃຫ້ເກີດມີຄວາມລ່າຊ້າໃນການປ້ອນຂໍ້ມູນ. ພ້ອມນັ້ນ ເຫັນວ່າ ຈຳນວນເຈົ້າໜ້າທີ່ ແລະ ປ່ອງແຈ້ງຍັງມີຈຳນວນບໍ່ພຽງພໍເມື່ອທຽບກັບຈຳນວນຜູ້ມາໃຊ້ບໍລິການ.

3. **ຂັ້ນຕອນການຂໍໃບຢັ້ງຢືນສຸຂານາໄມພືດ** ສ້າງຄວາມຫຍຸ້ງຍາກໃຫ້ແກ່ພາກທຸລະກິດຢູ່ຕ່າງແຂວງຫຼາຍພໍສົມຄວນ ຍ້ອນວ່າ ກ່ອນຂະແໜງກະສິກຳ ແລະ ປ່າໄມ້ ຈະພິຈາລະນາ ອອກໃບຢັ້ງຢືນສຸຂະນາໄມພືດ ເຈົ້າໜ້າທີ່ຕ້ອງໄດ້ລົງກວດກາສິນຄ້າຕົວຈິງ ແຕ່ເນື່ອງຈາກວ່າ ບາງສິນຄ້າເກັບໄວ້ຢູ່ໃກ້ສະຖານທີ່ເກັບຊື້ ແລະ ເຂດການຜະລິດ ແຕ່ໄກຈາກຫ້ອງການ (ບໍລິສັດ) ເຮັດໃຫ້ເສຍເວລາໃນການເດີນທາງ ແລະ ມີຄ່າສິ້ນເປືອງຫຼາຍ ແຕ່ການລົງກວດກາຕົວຈິງເປັນພຽງແຕ່ຮູບການເທົ່ານັ້ນ. ນອກນັ້ນ, ຢູ່ບາງແຂວງ ບໍ່ສາມາດອອກໃບຢັ້ງຢືນສຸຂານາໄມພືດໄດ້ ແລະ ຕ້ອງໄດ້ມາສະເໜີຂໍຢູ່ນະຄອນຫຼວງ ເຮັດໃຫ້ເສຍເວລາ ແລະ ຄ່າໃຊ້ຈ່າຍໃນການເດີນທາງ. ຍິ່ງໄປກວ່ານັ້ນ, ບາງແຂວງເກັບຄ່າທຳນຽມ ໂດຍສ້າງບິນຂຶ້ນເອງ ໂດຍບໍ່ເປັນເອກະພາບກັບແບບຟອມທີ່ຂັ້ນສູນກາງກຳນົດໃຫ້ ແລະ ການເກັບຄ່າທຳນຽມກໍ່ບໍ່ໄດ້ອີງໃສ່ລັດຖະບັນຍັດ ຂອງປະທານປະເທດ 003/ປປທ ລົງວັນທີ 26.12.2012 ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ.

4. **ການຂໍອະນຸຍາດຂຸດຄົ້ນສິນຄ້າປະເພດເຄື່ອງປ່າຂອງດົງ ເພື່ອສົ່ງອອກ** ຍັງມີຫຼາຍຂັ້ນຂອດ. ບາງປະເພດສິນຄ້າ ເຊັ່ນ ໝາກແໜ່ງ ຕ້ອງໄດ້ເກັບຊື້ເປັນລະດູການ ເມື່ອມີຫຼາຍຂັ້ນຕອນແບບນີ້ ເຮັດໃຫ້ບໍ່ສາມາດເກັບກູ້ໄດ້ທັນເວລາ.

5. **ການຄິດໄລ່ຄ່າທຳນຽມອາກອນ** ໄດ້ສ້າງຄວາມສັບສົນໃຫ້ແກ່ພາກທຸລະກິດ ໃນພາກປະຕິບັດຕົວຈິງ ຫຼາຍພໍສົມຄວນ ເນື່ອງຈາກລະບຽບການ, ມາດຕະຖານການຄິດໄລ່ ແລະ ການຈັດເກັບອາກອນແຕ່ລະປະເພດສິນຄ້າ ຍັງບໍ່ມີຄວາມຈະແຈ້ງ ເຊິ່ງອາດເກີດຈາກຄວາມບໍ່ໂປ່ງໃສຂອງເຈົ້າໜ້າທີ່ ເຮັດໃຫ້ເຂົາເຈົ້າສວຍໃຊ້ຊ່ອງວ່າງທີ່ມີຢູ່ເພື່ອຫາຜົນໂຫຍດແກ່ຕົນເອງ.

## III. ຂໍ້ສະເໜີຂອງພາກທຸລະກິດ

ເພື່ອເປັນການແກ້ໄຂບັນຫາທີ່ກ່າວມາຂ້າງເທິງ ພາກທຸລະກິດ ໄດ້ສະເໜີບາງວິທີແກ້ໄຂ ດັ່ງນີ້:

1. **ສ້າງຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດຂັ້ນຕອນ, ລະບຽບການຕ່າງໆ ລະຫວ່າງຂະແໜງການທີ່ກ່ຽວຂ້ອງ ໃຫ້ກະທັດຮັດ ຖືກຕ້ອງ ຄົບຖ້ວນ ແລະ ເປັນເອກະພາບ:** ຂະແໜງການທີ່ກ່ຽວຂ້ອງ ຄວນມີການປຶກສາຫາລື ເພື່ອພ້ອມກັນກວດກາຄືນບັນດານິຕິກຳ ແລະ ລະບຽບການທີ່ນຳໃຊ້ຢູ່ປະຈຸບັນ ວ່າມີຄວາມສອດຄ່ອງກັນ ຫຼື ບໍ່. ພ້ອມນັ້ນ ຄວນມີການຢັ່ງຄວາມຄິດເຫັນຂອງ ພາກທຸລະກິດ ກ່ອນການອອກ ແລະ ຈັດຕັ້ງປະຕິບັດນິຕິກຳ ຫຼື ນະໂຍບາຍໃດໜຶ່ງ ຢ່າງຈິງຈັງ ແລະ ເປີດກວ້າງ ກວ່າເກົ່າ ເພື່ອຮັບປະກັນຄວາມເປັນເອກະພາບ ລະຫວ່າງຂະແໜງການຂອງລັດ ໃນການຄຸ້ມຄອງ ແລະ ອຳນວຍຄວາມສະດວກໃຫ້ແກ່ພາກທຸລະກິດ ໃນການຈັດຕັ້ງປະຕິບັດຕົວຈິງ. ພ້ອມດຽວກັນນັ້ນ, ໃຫ້ລະບຸລາຍລະອຽດ ກ່ຽວກັບ ຄວາມຮັບຜິດຊອບ ແລະ ພາລະບົດບາດໃນການອອກອະນຸຍາດ ຂອງຂະແໜງການຕ່າງໆໃນແຕ່ລະຂັ້ນ ເຊັ່ນ: ຂັ້ນບ້ານ, ຂັ້ນເມືອງ, ຂັ້ນແຂວງ ຕ້ອງປະຕິບັດແບບໃດ ເພື່ອຮັບປະກັນຄວາມຈະແຈ້ງ ແລະ ບໍ່ເປັນການເປີດຊ່ອງທາງໃຫ້ແກ່ບຸກຄົນທີ່ບໍ່ດີ.
2. **ປັບປຸງ ແລະ ຈັດລະບົບການເຮັດວຽກ, ຂັ້ນຕອນການດຳເນີນເອກະສານ ແລະ ການອະນຸມັດເອກະສານໃຫ້ເໝາະສົມ** ເນື່ອງຈາກວ່າໃນໄລຍະຜ່ານມາລະບົບການເຮັດວຽກ, ຂັ້ນຕອນການດຳເນີນເອກະສານ ແລະ ການອະນຸມັດເອກະສານຂອງຂະແໜງການທີ່ກ່ຽວຂ້ອງ ແມ່ນໃຊ້ເວລາຫຼາຍເກີນຄວາມຈຳເປັນ ແລະ ຄາດຄະເນບໍ່ໄດ້ ຊຶ່ງສົ່ງຜົນໃຫ້ເພີ່ມຄ່າໃຊ້ຈ່າຍທີ່ບໍ່ຈຳເປັນ ເຊັ່ນ: ຄ່າໃຊ້ຈ່າຍໃນການຝາກສາງທີ່ເພີ່ມຂຶ້ນເນື່ອງຈາກບໍ່ສາມາດນຳສິນຄ້າອອກໄດ້ທັນຕາມກຳນົດເວລາ ແລະ ການຖືກປັບໃໝຈາກຄູ່ຄ້າເພາະສົ່ງສິນຄ້າໃຫ້ຄູ່ຄ້າບໍ່ທັນຕາມກຳນົດເວລາ. ຖ້າສາມາດຫຼຸດຜ່ອນບັນຫາດັ່ງກ່າວໄດ້ ຈະເປັນປັດໃຈໜຶ່ງໃນການຊ່ວຍໃຫ້ພາກທຸລະກິດສາມາດຫຼຸດຜ່ອນຕົ້ນທຶນ ແລະ ສາມາດແຂ່ງຂັນກັບປະເທດຄູ່ຄ້າໄດ້ຢ່າງເຕັມສ່ວນ.
3. **ການຄັດເລືອກ ແລະ ພັດທະນາບຸກຄະລາກອນ ແມ່ນອີກແນວທາງໜຶ່ງໃນການແກ້ໄຂບັນຫາຄວາມຫຍຸ້ງຍາກທີ່ເກີດຂຶ້ນ.** ເລີ່ມຕົ້ນຈາກການຄັດເລືອກເອົາເຈົ້າໜ້າທີ່ຜູ້ມີຄຸນສົມບັດສົມທຳປະຕິວັດ ແລະ ຄວາມຮູ້ຄວາມສາມາດທີ່ແທ້ຈິງມາປະຕິບັດວຽກ ໄປພ້ອມໆກັບການຈັດຝຶກອົບຮົມ ເພື່ອສ້າງແນວຄວາມຄິດ, ທັດສະນະຄະຕິ, ຈັນຍາບັນ ແລະ ຄວາມຮັບຜິດຊອບອັນຖືກຕ້ອງ ແລະ ເໝາະສົມຕໍ່ວຽກ ໃຫ້ແກ່ພະນັກງານລັດ. ປັບປຸງຂີດຄວາມສາມາດຂອງເຈົ້າໜ້າທີ່ ໃຫ້ມີຄວາມຊຳນານ ແລະ ເຂົ້າໃຈຕໍ່ກັບວຽກງານທີ່ຕົນຮັບຜິດຊອບ ເພື່ອໃຫ້ສາມາດປະຕິບັດໜ້າທີ່ ແລະ ແກ້ໄຂບັນຫາໄດ້ຢ່າງມີປະສິດທິພາບຂຶ້ນກວ່າເກົ່າ.
4. **ການເຜີຍແຜ່ລະບຽບການ ກ່ຽວກັບ ຂັ້ນຕອນການຂໍອະນຸຍາດ** ເປັນອີກວິທີການໜຶ່ງທີ່ຈະຊ່ວຍຍົກລະດັບຄວາມຮັບຮູ້ ແລະ ຄວາມເຂົ້າໃຈຂອງພາກທຸລະກິດ ຕໍ່ກັບຄວາມໝາຍ ແລະ ຄວາມສຳຄັນຂອງບັນດາລະບຽບ ຫຼັກການ ແລະ ຂັ້ນຕອນທີ່ພາກລັດນຳໃຊ້ຄຸ້ມຄອງ ແລະ ອຳນວຍຄວາມສະດວກ ໃຫ້ແກ່ການນຳເຂົ້າ - ສົ່ງອອກ ເຊັ່ນ: ເຜີຍແຜ່ລະບຽບການ ແລະ ວິທີການຄິດໄລ່ອາກອນ, ລະບຽບການທີ່ກ່ຽວຂ້ອງກັບການດຳເນີນຂັ້ນຕອນການນຳເຂົ້າ - ສົ່ງອອກ.
5. **ປັບປຸງອຸປະກອນ, ເຄື່ອງມືຮັບໃຊ້ ແລະ ໂປຼແກຼມຕ່າງໆ** ໃນການດຳເນີນຂັ້ນຕອນໃຫ້ມີປະສິດທິພາບ ແລະ ຮັບປະກັນຄວາມສະຖຽນ ຄວນມີການສ້າງລະບົບຮອງຮັບໃນກໍລະນີມີບັນຫາດ້ານຄວາມສະຖຽນຂອງໂປຼແກຼມ ໄປພ້ອມໆກັບການເພີ່ມເຈົ້າໜ້າທີ ແລະ ປ່ອງບໍລິການແຈ້ງເອກະສານ ໃຫ້ຫຼາຍຂຶ້ນຕື່ມ ເພື່ອຮັບປະກັນຄວາມວ່ອງໄວໃນການດຳເນີນການແຈ້ງເອກະສານ.

## IV. <u>ສິ່ງທີ່ພາກລັດຄວນເອົາໃຈໃສ່</u>

ການປະສານງານທີ່ດີລະຫວ່າງພາກລັດ ແລະ ພາກທຸລະກິດ ແມ່ນມີຄວາມສຳຄັນ ແລະ ຈຳເປັນ, ລັດຖະບານ ລາວ ໄດ້ມີນະໂຍບາຍສົ່ງເສີມການປະສານງານ ລະຫວ່າງ ພາກລັດ ກັບ ພາກທຸລະກິດ ໂດຍຜ່ານກົນໄກ ຕ່າງໆ ເຊັ່ນ: ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ, ສະພາການຄ້າ ແລະ ອຸດສາຫະກຳ ແຂວງ, ກອງປະຊຸມທຸລະກິດລາວ, ແລະ ກອງເລຂາອຳນວຍຄວາມສະດວກທາງດ້ານການຄ້າ. ເຖິງຢ່າງໃດກໍ່ຕາມ, ການປະສານງານແມ່ນຍັງບໍ່ເປັນປົກກະຕິ ແລະ ເປັນລະບົບເທົ່າທີ່ຄວນ ຊຶ່ງມັນສະແດງ

ອອກໃຫ້ເຫັນໃນເວລາທີ່ພາກທຸລະກິດພົບຄວາມຫຍຸ້ງຍາກ ພວກເຂົ້າໄດ້ສະເໜີບັນຫາດ້ວຍຫຼາຍຊ່ອງທາງ ແລະ ຜ່ານຫຼາຍຮູບແບບ ຕໍ່ຂະແໜງການທີ່ກ່ຽວຂ້ອງຂອງລັດ ເຊັ່ນ: ບາງບໍລິສັດ ສະເໜີບັນຫາຕໍ່ສະພາການຄ້າ ແລະ ອຸດສາຫະກໍາ ແຫ່ງຊາດລາວ, ບາງບໍລິສັດສະເໜີຫາຂະແໜງການກ່ຽວຂ້ອງ ໂດຍກົງ ຂຶ້ນກັບລັກສະນະຂອງບັນຫາ (ບັນຫາໃຫຍ່ ຫຼື ບັນຫານ້ອຍ). ໄລຍະເວລາທີ່ໃຊ້ໃນການແກ້ໄຂບັນຫາຂອງພາກທຸລະກິດແຕ່ລະຄັ້ງແມ່ນມີຄວາມແຕກຕ່າງກັນໄປຕາມແຕ່ລະກໍລະນີ ບາງຄັ້ງບັນຫາອາດຈະຖືກທ້ອນໂຮມໄວ້ ແລ້ວນໍາສະເໜີໃນກອງປະຊຸມທ້າຍປີບາດດຽວ ຊຶ່ງເຮັດໃຫ້ບໍ່ສາມາດແກ້ໄຂບັນຫາຂອງພາກທຸລະກິດໄດ້ທ່ວງທັນກັບສະພາບ, ສະນັ້ນ ບາງບໍລິສັດອາໃສຄວາມລຶ້ງເຄີຍກັບພະນັກງານລັດ ໂດຍພົວພັນຫາເຈົ້າໜ້າທີ່ ທີ່ກ່ຽວຂ້ອງໂດຍກົງ ເພື່ອປຶກສາຫາລືຂໍໃຫ້ແກ້ໄຂບັນຫາຂອງພວກເຂົາໂດຍທັນທີ. ໂດຍສ່ວນໃຫຍ່ພາກທຸລະກິດ ມີທັດສະນະດ້ານລົບຕໍ່ກັບການແກ້ໄຂບັນຫາຂອງພາກລັດ ເຮັດໃຫ້ເຂົາເຈົ້າຊອກຫາຊ່ອງທາງແກ້ໄຂບັນຫາດ້ວຍຕົວເອງ ຊຶ່ງສ່ວນໃຫຍ່ຈະຢູ່ນອກລະບົບ ແລະ ບາງບໍລິສັດອາດປ່ຽນໄປເຮັດທຸລະກິດໃໝ່. ສະນັ້ນ, ໃນຂອດການປະສານງານ ແລະ ຕິດຕາມແກ້ໄຂບັນຫາ ລະຫວ່າງພາກລັດ ແລະ ພາກທຸລະກິດ ຈຶ່ງຍັງເປັນອີກບັນຫາທີ່ຍັງຄ້າງຄາ ແລະ ຄວນໄດ້ຮັບການແກ້ໄຂປັບປຸງໃຫ້ດີຂຶ້ນ ແລະ ພາກລັດຄວນມີການພິຈາລະນາ ຫາວິທີທາງສ້າງຄວາມເຊື່ອໝັ້ນຂອງພາກທຸລະກິດ.

ໄປພ້ອມໆກັນນັ້ນ, ວຽກງານການເຜີຍແຜ່ຂໍ້ມູນຂ່າວສານທາງດ້ານນະໂຍບາຍ ແລະ ນິຕິກໍາ ໃຫ້ແກ່ພາກທຸລະກິດ ແມ່ນອີກວຽກງານໜຶ່ງທີ່ຕ້ອງໄດ້ຮັບການເອົາໃຈໃສ່ປັບປຸງ ແລະ ເສີມຂະຫຍາຍໃຫ້ທົ່ວເຖິງ. ຊຶ່ງພາກທຸລະກິດເອງໄດ້ຮຽກຮ້ອງໃຫ້ມີການເຜີຍແຜ່ຂໍ້ມູນດັ່ງກ່າວໃຫ້ຫຼາຍຂຶ້ນ ເພື່ອຮັບປະກັນການຈັດຕັ້ງປະຕິບັດໃຫ້ເປັນເອກະພາບກັນ ແລະ ເປັນການຫຼຸດຜ່ອນເວລາ ແລະ ຄ່າໃຊ້ຈ່າຍທີ່ອາດເກີດຂຶ້ນຈາກການປະກອບເອກະສານທີ່ບໍ່ຖືກຕ້ອງ ເນື່ອງຈາກຂາດຂໍ້ມູນຂ່າວສານທີ່ຖືກຕ້ອງ, ຄົບຖ້ວນ ແລະ ທັນກັບສະພາບການ.

## V. ສະຫຼຸບ

ບັນຫາ ແລະ ຂໍ້ຫຍຸ້ງຍາກ ຂ້າງເທິງນີ້ ແມ່ນຄວາມຄິດເຫັນຈາກມຸມມອງ ແລະ ທັດສະນະຂອງພາກທຸລະກິດທີ່ດໍາເນີນການນໍາເຂົ້າ - ສົ່ງອອກ ແລະ ນໍາສິນຄ້າຜ່ານແດນ ຢູ່ໃນ ສປປ ລາວ ຊຶ່ງສາມາດນໍາໃຊ້ເປັນຂໍ້ມູນພື້ນຖານ ແລະ ບ່ອນອີງໃຫ້ແກ່ຂະແໜງການລັດ ໃນການທົບທວນຄືນສະພາບການຈັດຕັ້ງປະຕິບັດນະໂຍ ບາຍ ລະບຽບການ ນິຕິກໍາໃຫ້ສອດຄ່ອງກັບຕົວຈິງ. ທັງໝົດນັ້ນເພື່ອບັນລຸໄດ້ເປົ້າໝາຍການປະກອບສ່ວນເຂົ້າໃນການເຕີບໂຕທາງດ້ານເສດຖະກິດຂອງ ສປປ ລາວ ຕາມທິດທາງນະໂຍບາຍຂອງພັກ ແລະ ລັດຖະບານ ພ້ອມນັ້ນກໍ່ເພື່ອເປັນການສ້າງສະພາບແວດລ້ອມໃນການດໍາເນີນທຸລະກິດທີ່ເອື້ອອໍານວຍໃຫ້ແກ່ພາກທຸລະກິດ ຂອງ ສປປ ລາວ ໃນຍຸກຂອງການເຊື່ອມໂຍງເສດຖະກິດກັບພາກພື້ນ ແລະ ສາກົນ ເພື່ອຮັບປະກັນ ຄວາມສາມາດແຂ່ງຂັ້ນຂອງພາກທຸລະກິດລາວ.

ກົມການນໍາເຂົ້າ ແລະ ສົ່ງອອກ
ພະແນກ ອໍານວຍຄວາມສະດວກທາງດ້ານການຄ້າ
ເບີໂທ/ແຟັກ: + 856 21 454 224
ອີເມລ: *enquiries@laotradeportal.gov.la ຫຼື laotfs@laomoic.org*